ເອກະສານຕິດຂັດ 1

## ການໃຫ້ທຶນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ໂປຣແກຣມການຕັດສິນໃຈດ້ວຍຕົນເອງ (SDP)

ຕາມທີ່ໄດ້ລະບຸໄວ້ໃນໜັງສືທີ່ມາພ້ອມກັບເອກະສານຕິດຂັດນີ້, ອີງຕາມ ປະມວນກົດໝາຍສະຫວັດດີການ ແລະ ສະຖາບັນ ໝວດ 4685.8(g), ການໃຫ້ທຶນແມ່ນມີໃຫ້ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ SDP. ການໃຊ້ທຶນເຫຼົ່ານີ້ທີ່ອາດເກີດຂຶ້ນ ແລະ ຂະບວນການດຳເນີນການຕັດສິນໃຈນີ້ ແລະ ການນຳໃຊ້ທຶນເຫຼົ່ານີ້ແມ່ນຖືກກຳນົດໄວ້ຢູ່ຂ້າງລຸ່ມນີ້.

| ຂັ້ນຕອນ | ລາຍລະອຽດ |
|---|---|
| **ຂອບດເຂດ ບລິມະສິດ ສຳລັບການ ໃຊ້ ການໃຫ້ທຶນ** | ຂົງເຂດບູລິມະສິດສຳລັບການໃຫ້ທຶນລວມມີ:<br>• **ຄວາມຕ້ອງການສຳລັບການປະຖົມນິເທດ** – ຄ່າໃຊ້ຈ່າຍໃນການຈັດການປະຖົມນິເທດ ເຊິ່ງລວມເຖິງ ແຕ່ບໍ່ຈຳກັດພຽງການດັດແກ້/ການປຣິນເອກະສານ, ຄ່າໃຊ້ຈ່າຍສຳລັບຜູ້ເວົ້າ/ຜູ້ນຳສະເໜີ, ຄ່າໃຊ້ຈ່າຍພື້ນທີ່ປະຊຸມ, ການແປພາສາ/ລ່າມແປພາສາ, ອື່ນໆ.<br>• ***ການຈັດຫາ/ການອົບຮົມຜູ້ໃຫ້ບໍລິການອິດສະຫຼະ*** – ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເພີ່ມຈຳນວນຜູ້ໃຫ້ບໍລິການອິດສະຫຼະທີ່ມີຢູ່. ສິ່ງນີ້ສາມາດລວມເຖິງ ແຕ່ບໍ່ຈຳກັດພຽງການຈັດຫາ, ການພັດທະນາ ແລະ/ຫຼື ການຈັດຫາການອົບຮົມ, ການແປພາສາ/ລ່າມແປພາສາ, ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຈັດຫາການອົບຮົມ, ອື່ນໆ.<br>• **ກຸ່ມ/ການສຳມະນາແບບຮ່ວມມືກັນ** – ການປະຊຸມຕໍ່ເນື່ອງ ແລະ/ຫຼື ເປັນໄລຍະໆ ສຳລັບຜູ້ເຂົ້າຮ່ວມ ແລະ ຄອບຄົວ, ຜູ້ໃຫ້ບໍລິການ ແລະ ອື່ນໆ ເພື່ອໃຫ້ໂອກາດການຮຽນຮູ້ ແລະ ການແກ້ໄຂບັນຫາ. ຄ່າໃຊ້ຈ່າຍສາມາດລວມເຖິງ ແຕ່ບໍ່ຈຳກັດພຽງຄ່າໃຊ້ຈ່າຍໃນການເດີນທາງຂອງຜູ້ເວົ້າ/ຜູ້ນຳສະເໜີ, ນາຍແປພາສາ/ລ່າມແປພາສາ, ເຄື່ອງມື, ການໃຊ້ຈ່າຍພື້ນທີ່ການປະຊຸມ, ອື່ນໆ. ສິ່ງນີ້ອາດກ່ຽວຂ້ອງກັບການປະສານງານກັບ LVAC/ຜູ້ເຂົ້າຮ່ວມໃນຂົງເຂດອື່ນ ເພື່ອເພີ່ມຂອບເຂດໂອກາດການຮຽນຮູ້/ການແບ່ງປັນຂໍ້ມູນ.<br>• **ການອົບຮົມຮ່ວມກັນ** – ການອົບຮົມສຳລັບຜູ້ເຂົ້າຮ່ວມ, ຄອບຄົວ, ພະນັກງານຂອງສູນພາກພື້ນ ແລະ ສະມາຊິກຂອງຄະນະກຳມະການໃຫ້ຄຳແນະນຳອາສາສະໝັກໃນທ້ອງຖິ່ນ, ອື່ນໆ. ການອົບຮົມຮ່ວມກັນຄວນຈະແນໃສ່ໂອກາດການຮຽນຮູ້ຮ່ວມກັນທີ່ເພີ່ມຄວາມເຂົ້າໃຈຮ່ວມແບບເປັນໝູ່ຄະນະກ່ຽວກັບທຸກສິ່ງທີ່ກ່ຽວຂ້ອງກັບ SDP. ຄ່າໃຊ້ຈ່າຍສາມາດລວມເຖິງ ແຕ່ບໍ່ຈຳກັດພຽງການພັດທະນາ ແລະ/ຫຼື ການຈັດຫາການອົບຮົມ, ການແປພາສາ/ລ່າມແປພາສາ, ຄ່າໃຊ້ຈ່າຍທີ່ກ່ຽວພັນກັບການຈັດຫາການຝຶກອົບຮົມ, ອື່ນໆ.<br>• **ຄວາມຊ່ວຍເຫຼືອ/ການຝຶກສອນສຳລັບການປ່ຽນແປງສູ່ SDP** – ຄວາມຊ່ວຍເຫຼືອສຳລັບຜູ້ເຂົ້າຮ່ວມເພື່ອປ່ຽນແປງສູ່ SDP. ສິ່ງນີ້ສາມາດລວມເຖິງຄວາມຊ່ວຍເຫຼືອໃນຂົງເຂດ ເຊັ່ນ: ການຕັດສິນໃຈວ່າ ແບບຢ່າງການບໍລິການໃນການຄຸ້ມຄອງການ |

| | |
|---|---|
| | ເງິນໃດແມ່ນເໝາະສົມທີ່ສຸດສໍາລັບຜູ້ເຂົ້າຮ່ວມ, ຄໍາແນະນໍາສໍາລັບການຈັດຫາ/ການຈ້າງພະນັກງານ, ວິທີການສ້າງແຜນການຈັດຈ້າງພະນັກງານສໍາຮອງ, ອື່ນໆ.<br>• **ການພັດທະນາແຜນການໃຊ້ຈ່າຍເບື້ອງຕົ້ນ** – ຄວາມຊ່ວຍເຫຼືອໃນການພັດທະນາການໃຊ້ງົບປະມານສ່ວນບຸກຄົນຂອງຜູ້ເຂົ້າຮ່ວມຜ່ານແຜນການໃຊ້ຈ່າຍຂອງພວກເຂົາ ເຊິ່ງອາດລວມເຖິງການປຶກສາຫາລືກັບຜູ້ໃຫ້ບໍລິການຄຸ້ມຄອງການເງິນ.<br>• ***ຄວາມຕ້ອງການເພີ່ມເຕີມທີ່ຖືກລະບຸໄວ້*** – ລາຍການ/ກິດຈະກໍາທີ່ຈະສະໜັບສະໜູນຄວາມຕ້ອງການຂອງຜູ້ເຂົ້າຮ່ວມ ແລະ ການຈັດຕັ້ງປະຕິບັດໂປຣແກຣມ. |
| **ກໍານົດວ່າ ທຶນຄວນຈະຖືກໃຊ້ແນວໃດ** | LVAC ແລະ ສູນພາກພື້ນຄວນປະເມີນຄວາມຕ້ອງການທ້ອງຖິ່ນຮ່ວມກັນໃນການຈັດຕັ້ງປະຕິບັດ SDP ເພື່ອກໍານົດການໃຊ້ທຶນທີ່ມີໃຫ້ເກີດປະສິດທິພາບສູງສຸດ. ອີງຕາມການປະເມີນຜົນຮ່ວມກັນນີ້ ແມ່ນຄວນພັດທະນາລາຍການຂົງເຂດບູລິມະສິດ (ຂ້າງເທິງ) ທີ່ຈະໄດ້ຮັບທຶນເຊິ່ງລວມເຖິງຈໍານວນຄາດຄະເນທີ່ຈະຖືກໃຊ້ສໍາລັບແຕ່ລະຂົງເຂດທີ່ໄດ້ເລືອກໄວ້. ການຄາດຄະເນທີ່ລະອຽດ ແລະ ເປັນຂັ້ນສໍາລັບແຕ່ລະຂົງເຂດທີ່ຖືກລະບຸໄວ້ແມ່ນບໍ່ຈໍາເປັນໃນຈຸດນີ້. ເຖິງແນວໃດກໍຕາມ ການສົນທະນາຫາລືກ່ຽວກັບຄ່າໃຊ້ຈ່າຍບາງຢ່າງທີ່ມີລາຍລະອຽດເຫຼົ່ານີ້ ອາດຊ່ວຍແຈ້ງໃຫ້ຮັບເຖິງການຄາດຄະເນ.<br><br>ເມື່ອໄດ້ເຮັດຂໍ້ຕົກລົງກ່ຽວກັບການນໍາໃຊ້ທຶນແລ້ວ, LVAC ແລະ ສູນພາກພື້ນຕ້ອງຮ່ວມກັນລາຍງານສິ່ງດັ່ງຕໍ່ໄປນີ້ໃຫ້ແກ່ sdp@dds.ca.gov:<br><br>• ລາຍການຂົງເຂດບູລິມະສິດທີ່ຈະໄດ້ຮັບທຶນ;<br>• ຈໍານວນທຶນຄາດຄະເນທີ່ໄດ້ຈັດສັນໃຫ້ແກ່ແຕ່ລະຂົງເຂດບູລິມະສິດ; ແລະ<br>• ການອະທິບາຍໂດຍຫຍໍ້ກ່ຽວກັບວ່າ ການຕັດສິນໃຈຖືກດໍາເນີນການແນວໃດ.<br><br>ການປ່ຽນແປງສາມາດດໍາເນີນການໄດ້ແບບຕໍ່ເນື່ອງ ຕາມທີ່ຄວາມຕ້ອງການຂອງຜູ້ເຂົ້າຮ່ວມເກີດມີການປ່ຽນແປງ. ເຖິງແນວໃດກໍຕາມ ການນໍາໃຊ້ທຶນຕ້ອງສືບຕໍ່ສອດຄ່ອງກັບບົດບັນຍັດ ແລະ ຄໍາແນະນໍານີ້ ແລະ ການຕັດສິນໃຈກ່ຽວກັບການປ່ຽນແປງໃດໆແມ່ນຕ້ອງດໍາເນີນການຮ່ວມກັນໂດຍ LVAC ແລະ ສູນພາກພື້ນ. |
| **ການໄຫຼວຽນຂອງເງິນທຶນ** | ຈໍານວນການໃຫ້ທຶນທີ່ລະບຸໃນໜ້າຕໍ່ໄປນີ້ຖືກຈັດສັນໄປຍັງສູນພາກພື້ນແຕ່ລະແຫ່ງ. ຕາມທີ່ໄດ້ລະບຸໄວ້ກ່ອນໜ້າ, ການຕັດສິນໃຈກ່ຽວກັບການນໍາໃຊ້ທຶນເຫຼົ່ານີ້ຕ້ອງຖືກດໍາເນີນການຮ່ວມກັນໂດຍ LVAC ແລະ ສູນພາກພື້ນ. ຕໍ່ຈາກນັ້ນ, ສູນພາກພື້ນຈະຊົດໃຊ້ຄືນໃຫ້ແກ່ບຸກຄົນ/ອົງກອນທີ່ໃຫ້ການບໍລິການ. |

**ເອກະສານຕິດຂັດ 1**

ການແຈກຢາຍທຶນແມ່ນຕາມສັດສ່ວນຈຳນວນຂອງພື້ນທີ່ SDP ທີ່ມີຢູ່ໃນແຕ່ລະສູນພາກພື້ນ.

| **ການໃຫ້ທຶນສະໜັບສະໜູນຜູ້ເຂົ້າຮ່ວມ SDP –ປີງົບປະມານການເງິນ 2020/2021 *** | | |
|---|---|---|
| **ສູນພາກພື້ນ** | **ພື້ນທີ່ SDP ຢູ່ແຕ່ລະສູນພາກພື້ນ** | **ທຶນທີ່ມີຢູ່** |
| ACRC | 179 | $146,064 |
| CVRC | 140 | $114,240 |
| ELARC | 110 | $89,760 |
| FDLRC | 73 | $59,568 |
| FNRC | 60 | $48,960 |
| GGRC | 68 | $55,488 |
| HRC | 99 | $80,784 |
| IRC | 256 | $208,896 |
| KRC | 95 | $77,520 |
| NBRC | 66 | $53,856 |
| NLACRC | 183 | $149,328 |
| RCEB | 154 | $125,664 |
| RCOC | 151 | $123,216 |
| RCRC | 55 | $44,880 |
| SARC | 125 | $102,000 |
| SCLARC | 110 | $89,760 |
| SDRC | 207 | $168,912 |
| SGPRC | 95 | $77,520 |
| TCRC | 110 | $89,760 |
| VMRC | 100 | $81,600 |
| WRC | 64 | $52,224 |
| ລວມທັງໝົດ | 2,500 | **$2,040,000** |

* ທຶນທີ່ຖືກສະຫງວນໄວ້ພາຍໃນວັນທີ 30/6/2021 ແມ່ນຕ້ອງຖືກໃຊ້ຈ່າຍພາຍໃນເດືອນມີນາ 2023.